ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

PCD

ເລກທີ 080 - /PCD
ນະຄອນຫລວງວຽງຈັນ, ວັນທີ 28 APR 2026

ຮຽນ : - ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ (ສຄຄຊ) ທີ່ນັບຖື;
- ທ່ານ ຜູ້ອຳນວຍການຕະຫຼາດຫລັກຊັບລາວ ທີ່ນັບຖື;
- ທ່ານຜູ້ຖືຮຸ້ນຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

ເລື່ອງ: ການເປີດເຜີຍຂໍ້ມູນຕາມຮອບວຽນບັນຊີ ປະຈຳປີ 2025.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 26 ພະຈິກ 2018;
- ອີງຕາມ ແຈ້ງການເປີດເຜີຍຂໍ້ມູນຂອງບໍລິສັດຈົດທະບຽນຮຸ້ນໃນ ຕະຫຼາດຫຼັກຊັບລາວ ສະບັບເລກທີ 007/25/ຕລຊລ, ລົງວັນທີ 22 ຕຸລາ 2025.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບ ກ່ຽວກັບການເປີດເຜີຍຂໍ້ມູນຕາມຮອບວຽນບັນຊີປະຈຳປີ 2025 ໂດຍສະເພາະເອກະສານລາຍງານການເງິນປະຈຳປີ 2025 ບໍລິສັດ ບໍ່ສາມາດເປີດເຜີຍຂໍ້ມູນດັ່ງກ່າວຜ່ານຊ່ອງຕະຫຼາດຫຼັກຊັບລາວໄດ້ ຕາມວັນເດືອນຖານ ຕາມລະບຽບການທີ່ກ່ຽວຂ້ອງໄດ້ ເນື່ອງຈາກຜູ້ກວດສອບຍັງບໍ່ສາມາດສົ່ງບົດລາຍງານການເງິນປະຈຳປີ 2025 ໃຫ້ ພກພ ໄດ້ຍ້ອນ: ກຳລັງສັງລວມຂໍ້ມູນທີ່ໄດ້ຮັບທັງໝົດໂດຍສະເພາະລາຍການທຸລະກຳທີ່ບໍລິສັດໄດ້ດຳເນີນຢູ່ເຊັ່ນ: ສັນຍາກໍ່ສ້າງໃຫມ່ ແລະ ເອກະສານພວມດຳເນີນການກໍ່ສ້າງ, ລາຍການເງິນເຂົ້າມາໃນບໍລິສັດ ໃນປີ 2026 ເພື່ອມາວິເຄາະຜົນກະທົບຂອງໜ້າ ບົດລາຍງານຂອງຜູ້ກວດສອບເຊິ່ງຈະໃຊ້ເວລາປະມານ 1-2 ອາທິດ, ຄາດວ່າຈະສຳເລັດ ແລະ ສາມາດເປີດເຜີຍຂໍ້ມູນໄດ້ໃນວັນທີ 5/05/2026 ນີ້.

ສະນັ້ນ,ຈຶ່ງຂໍລາຍງານເຫດຜົນດັ່ງກ່າວ ມາຍັງສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ (ສຄຄຊ), ຕະຫຼາດຫຼັກຊັບລາວ (ຕລຊລ) ແລະ ຜູ້ຖືຮຸ້ນຂອງ ພກພ ເພື່ອຮັບຊາບ, ຫວັງຢ່າງຍິ່ງວ່າຄົງຈະໄດ້ຮັບການພິຈາລະນາຈາກທ່ານຕາມທາງຄອນດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່ຽ່ງສູງ

ຜູ້ອຳນວຍການໃຫຍ່
ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມຄອນຕິເນັນໂທ ພລາຊາ, ບ້ານສີຍິວເໜືອ, ເມືອງສີໂຄດຕະບອງ, ນະຄອນຫລວງຈັນ.Tel/Fax: (856-21)265394; E-mail: info@pcdlao.com ; website: www.pcdlao.com